**ມິຊຊາອາທິດທີ 4 ກຳນົດພຣະກຣິສຕະຄົມ**

**ວັນທີ 18 ທັນວາ 2022**



**ພຣະວໍລະສານໂດຍນັກບຸນມັດເທວ 1, 18-24**

ພຣະເຢຊູເຈົ້າໄດ້ຊົງບັງເກີດມາດັ່ງນີ້: ພຣະນາງມາຣີອາມານດາຂອງພຣະອົງເປັນຄູ່ໝັ້ນຂອງຢໍແຊ. ກ່ອນທີ່ທ່ານທັງສອງໄດ້ຢູ່ຮ່ວມກັນນາງກໍໄດ້ຊົງຄັນດ້ວຍລິດພຣະຈິດ. ຢໍແຊຜູ້ສາມີເປັນຄົນຊອບທຳແລະບໍ່ຢາກໃຫ້ນາງເສຍໜ້າ ຈຶ່ງຕົກລົງໃນໃຈວ່າຈະສົ່ງນາງທາງລັບ.

ໃນເວລາທ່ານກຳລັງຄິດຢູ່ໃນໃຈດັ່ງນີ້ ເທວະດາອົງໜຶ່ງຂອງພຣະອົງເຈົ້າກໍປະຈັກມາຫາທ່ານທາງຄວາມຝັນແລະກ່າວກັບທ່ານວ່າ: ຢໍແຊບຸດຂອງດາວິດເອີຍ! ຢ່າວິຕົກເລີຍໃນການຮັບເອົານາງມາຣີອາພັນລະຍາຂອງເຈົ້າໄວ້ຮ່ວມເຮືອນ. ດ້ວຍວ່າການປະຕິສົນໃນນາງນັ້ນເປັນກິດຈະການຂອງພຣະຈິດເຈົ້າ. ນາງຈະບັງເກີດບຸດຊາຍຄົນໜຶ່ງແລະເຈົ້າຈະຕັ້ງຊື່ວ່າເຢຊູ. ດ້ວຍເຫດວ່າແມ່ນບຸດຜູ້ນີ້ແລ້ວທີ່ຈະຊ່ວຍປະຊາກອນຂອງພຣະອົງໃຫ້ຫວິດພ້ອຍຈາກບາບຂອງເຂົາ. ສິ່ງເຫລົ່ານີ້ໄດ້ເປັນມາກໍເພື່ອໃຫ້ສຳເລັດຕາມວາຈາຂອງພຣະອົງເຈົ້າໂດຍທາງປະພາສົກວ່າ: ນາງພົມມະຈາລີຈະຊົງຄັນແລະຈະບັງເກີດບຸດຊາຍຄົນໜຶ່ງທີ່ຈະໄດ້ຮັບນາມວ່າ: ແອມມານູແອນ, ເປັນຊື່ທີ່ມີຄວາມໝາຍວ່າ: ພຣະເຈົ້າສະຖິດຢູ່ກັບພວກເຮົາ.

ເມື່ອຕື່ນນອນແລ້ວ, ຢໍແຊກໍກະທຳຕາມທີ່ເທວະດາຂອງພຣະອົງເຈົ້າໄດ້ສັ່ງບອກ ຄືທ່ານໄດ້ຮັບເອົາພັນລະຍາຂອງທ່ານໄວ້ຢູ່ຮ່ວມເຮືອນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວາຈາພຣະເຈົ້າໃນວັນອາທິດທີ 4 ກຳນົດພຣະກຣິສຕະຄົມນີ້ຕຽມຈິດໃຈພວກເຮົາໃຫ້ຕ້ອນຮັບອົງພຣະເຢຊູພຣະບຸດຂອງພຣະເຈົ້າທີ່ຈະລົງມາບັງເກີດໃນຄ່ຳຄືນໂນແອນທີ່ຈະມາເຖິງ. ພຣະອົງມາເພື່ອຢູ່ກັບພວກເຮົາແລະຢູ່ທ່າມກາງພວກເຮົາຜູ້ຊຶ່ງພຣະອົງຊົງຮັກແພງແລະເລືອກສັນເປັນພິເສດໃຫ້ມີສ່ວນໃນວຽກງານໄຖ່ກູ້ຂອງພຣະອົງ. ດັ່ງພຣະນາງມາຣີອາຊຶ່ງປະພາສົກອີຊາຢາໄດ້ກ່າວໃນບົດອ່ານທີໜຶ່ງຂອງວັນນີ້. ແລະນັກບຸນຢໍແຊຊຶ່ງນັກບຸນມັດເທວໄດ້ບັນທຶກໃນພຣະວໍລະສານວັນນີ້. ທ່ານທັງສອງໄດ້ຮັບການເລືອກສັນຈາກພຣະເຈົ້າເປັນພິເສດໃຫ້ຕ້ອນຮັບອົງແອມມານູແອນເຂົ້າມາໃນຊີວິດຂອງພວກທ່ານແລະຢູ່ທ່າມກາງພວກທ່ານ. ພຣະນາງມາຣີອາແລະນັກບຸນຢໍແຊໄດ້ຮັບເອົາແຜນການຂອງພຣະເຈົ້າດ້ວຍຄວາມນົບນອບສະໝັກໃຈເຕັມໃຈ. ອາໄສຄຳຕອບຮັບຂອງທ່ານທັງສອງ, ພວກເຮົາຈຶ່ງໄດ້ຮູ້ຈັກພຣະບຸດພຣະເຈົ້າ, ພຣະຜູ້ກູ້ໄຖ່ຂອງພວກເຮົາ. ເພາະອາໄສພຣະອົງ ພວກເຮົາຈຶ່ງໄດ້ພົບກັບແສງສະວ່າງ, ກັບຄວາມຈິງຂອງຊີວິດ ແລະກັບຄວາມຮັກທີ່ແທ້ຈິງຂອງພຣະບິດາເຈົ້າທີ່ມີຕໍ່ພວກເຮົາ. ຫລືເວົ້າອີກຢ່າງ, ພຣະເຢຊູເຈົ້າມາໃນໂລກນີ້ເພື່ອເປີດເຜີຍຂໍ້ເລິກລັບແຫ່ງສະຫວັນໃຫ້ພວກເຮົາຮູ້ຈັກອັນແມ່ນຄວາມຮັກຊຶ່ງພຣະເຈົ້າ, ພຣະບິດາມາຕໍ່ພວກເຮົາຜ່ານທາງພຣະເຢຊູ, ພຣະບຸດຂອງພຣະອົງ. ນີ້ແລແມ່ນຄວາມໝາຍຂອງວັນບຸນໂນແອນ, ວັນບຸນແຫ່ງຄວາມຮັກຂອງພຣະເຈົ້າທີ່ມີຕໍ່ມະນຸດ, ວັນບຸນຊຶ່ງພຣອົງລົງມາຢູ່ກັບມະນຸດແລະຊ່ວຍມະນຸດໃຫ້ຮອດ. ແຕ່ພວກເຮົາ, ຜູ້ຊຶ່ງໄດ້ຖືກຮຽກເຊີນເປັນພິເສດໃຫ້ຕ້ອນຮັບການສະເດັດມາຂອງພຣະເຢຊູເຈົ້າ, ພວກເຮົາພ້ອມຫລືຍັງທີ່ຈະໃຫ້ພຣະອົງມາຢູ່ໃນຊີວິດຂອງພວກເຮົາແລະຢູ່ທ່າມກາງພວກເຮົາ? ຫລືພວກເຮົາຍັງສົນລະວົນນຳສິ່ງອື່ນທີ່ເປັນຂອງໂລກ? ຫລືດວງໃຈພວກເຮົາຍັງບໍ່ສຳພັດໄດ້ເຖິງຄວາມຮັກທີ່ພຣະເຈົ້າມີຕໍ່ພວກເຮົາຜ່ານທາງພຣະບຸດຂອງພຣະອົງ?

**ພາວະນາ**

ໂອອົງແອມມານູແອນ ໂຜດສະເດັດມາເຖີດຢ່າໄດ້ລໍຊ້າອີກເລີຍ. ລູກລໍຖ້າການສະເດັດມາຂອງພຣະອົງໃນຊີວິດຂອງລູກ ເພື່ອລູກຈະໄດ້ຢູ່ກັບພຣະອົງຜູ້ຊຶ່ງຮັກລູກແລະຊ່ວຍລູກໃຫ້ຮອດຈາກຄວາມຕາຍຍ້ອນບາບນັ້ນແລ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ